ສະໜັບສະໜູນໂດຍ: ອົງການຮ່ວມມືສາກົນ UNICEF

ທະບຽນພິມເລກທີ : ................

ຂະໜາດພິມ: 21x29,7 cm, ຈຳນວນ:............

ພິມທີ່: ...............

2012

ແບບເຝິກຫັດ ສິ່ງແວດລ້ອມອ້ອມຕົວເຮົາ ຊັ້ນອະນຸບານສຶກສາປີທີ 1 2012

ແບບເຝິກຫັດ

# ສິ່ງແວດລ້ອມອ້ອມຕົວເຮົາ

## ຊັ້ນອະນຸບານສຶກສາປີທີ 1



ກະຊວງສຶກສາທິການ ແລະ ກິລາ

ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ

2012

# ບົດເຝິກຫັດ
# ເນື້ອໃນໜ່ວຍການສອນ
# ສິ່ງແວດລ້ອມອ້ອມຕົວເຮົາ
# ສຳລັບເດັກ
# ອະນຸບານ ປີທີ 1


ຮຽບຮຽງໂດຍ: ແສງມະນີ ສຸພັນທະລົບ

ກວດແກ້ໂດຍ: ພວງຄຳ ສົມສະນິດ
ທອງແກ້ວ ອາສາ
ສົມບູນ ມາສຸວັນ
ເກດ ພັນຮັກ
ສີພາພອນ ມະນີວັນ
ວຽງແກ້ວ ພົມມະຈັກ
ມະນີວອນ ອາດຜາສຸກ
ພູມີ ພົມມະວົງ

ເຂົ້າໜ້າໂດຍ: ຈັນທະໄລ ເກີດຫຼ້າ
ທອງດຳ ທອງສິນ



ກະຊວງສຶກສາທິການ ແລະ ກິລາ
ສະຖາບັນຄົ້ນຄວ້າ ວິທະຍາສາດ ການສຶກສາ
2012

# ຄຳນຳ

ການກຽມຄວາມພ້ອມຂັ້ນພື້ນຖານທາງດ້ານວິທະຍາສາດເປັນເລື່ອງທີ່ຈຳເປັນ ແລະ ມີຄວາມສຳຄັນຕໍ່ການຮຽນວິທະຍາສາດໃນຊັ້ນປະຖົມ. ການສ້າງຄວາມຮູ້ຄວາມເຂົ້າໃຈຂັ້ນພື້ນຖານທາງດ້ານຄວາມຮູ້ທົ່ວໄປກ່ຽວກັບວິທະຍາສາດໃຫ້ແກ່ເດັກດ້ວຍກິດຈະກຳທີ່ມີຄວາມມ່ວນຊື່ນກະຕຸ້ນໃຫ້ເດັກໄດ້ສັງເກດ, ທົດລອງ, ຄົ້ນຄິດມີເຫດຜົນໃນການແກ້ໄຂບັນຫາຈະຊ່ວຍໃຫ້ເດັກມັກ ແລະ ສົນໃຈຮຽນວິທະຍາສາດຫຼາຍຂຶ້ນ.

ປຶ້ມບົດເຝິກຫັດໜ່ວຍສິ່ງແວດລ້ອມອ້ອມຕົວເຮົາ ເຫຼັ້ມນີ້ຮຽບຮຽງຂຶ້ນເພື່ອເຝິກແອບທັກສະການສັງເກດ ແລະ ແອບເວົ້າຄຳສັບທີ່ນຳໃຊ້ໃນຊີວິດປະຈຳວັນ ແລະ ວິທະຍາສາດທີ່ສອດຄ່ອງກັບມາດຖານສະມັດຖະພາບດ້ານ ການກຽມຄວາມພ້ອມທາງດ້ານວິທະຍາສາດສຳລັບເດັກອາຍຸ 3-4 ປີ.

ປຶ້ມບົດເຝິກຫັດເຫຼັ້ມນີ້ປະກອບດ້ວຍ 4 ຫົວຂໍ້ເນື້ອໃນທີ່ນຳມາເຝິກແອບເວົ້າຄຳສັບພື້ນຖານກ່ຽວກັບສິ່ງແວດລ້ອມອ້ອມຕົວເຮົາມີດັ່ງນີ້:

1. ຊື່ສິ່ງແວດລ້ອມທາງທຳມະຊາດ ແລະ ປະໂຫຍດ.
2. ການບົວລະບັດ ແລະ ການປົກປັກຮັກສາສິ່ງແວດລ້ອມທາງທຳມະຊາດ.
3. ຊື່ສິ່ງແວດລ້ອມອ້ອມຕົວທີ່ຄົນສ້າງຂຶ້ນ ແລະ ປະໂຫຍດ.
4. ການບົວລະບັດ ແລະ ການປົກປັກຮັກສາສິ່ງແວດລ້ອມອ້ອມຕົວທີ່ຄົນສ້າງຂຶ້ນ.

ການນຳໃຊ້ປຶ້ມບົດເຝິກຫັດໜ່ວຍສິ່ງແວດລ້ອມອ້ອມຕົວເຮົາເຂົ້າໃນການກຽມຄວາມພ້ອມໃນການຮຽນຮູ້ທາງດ້ານວິທະຍາສາດໃຫ້ມີຄຸນນະພາບຄູສອນ ແລະ ຜູ້ປົກຄອງຄວນໃຊ້ພາຍຫຼັງທີ່ເດັກໄດ້ຮຽນຮູ້ສິ່ງທີ່ມີໃນກິດຈະກຳວົງມົນຜ່ານມາແລ້ວ, ພ້ອມກັນນັ້ນ ຄູ ແລະ ຜູ້ປົກຄອງຊ່ວຍແນະນຳໃຫ້ເດັກໄດ້ເຝິກທັກສະການເວົ້າຊື່ທີ່ມີໃນຮູບພາບ ແລະ ການທາສີຮູບຕາມເນື້ອໃນທີ່ມີໃນປຶ້ມຫົວນີ້ດ້ວຍຕົນເອງໃຫ້ຫຼາຍຂຶ້ນ.

ພ້ອມດຽວກັນນີ້ຄະນະຮັບຜິດຊອບໃນການປັບປຸງ ແລະ ຮຽບຮຽງປຶ້ມຄູ່ມືຄູສະບັບນີ້ມີຄວາມຍິນດີເປັນຢ່າງຍິ່ງຮັບເອົາທຸກຄຳຄິດເຫັນຂອງບັນດາທ່ານເພື່ອປັບປຸງປຶ້ມບົດເຝິກຫັດດັ່ງກ່າວໃຫ້ມີຄຸນນະພາບດີຂຶ້ນ.

ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ

# ສາລະບານ

ໜ້າ

ກິດຈະກຳການຮຽນ-ການສອນ ໜ່ວຍ ສິ່ງແວດລ້ອມອ້ອມຕົວເຮົາ ສຳລັບ

ຊັ້ນອະນຸບານປີທີ 1 .......... 1

ສິ່ງແວດລ້ອມທາງທຳມະຊາດ ແລະ ປະໂຫຍດ .......... 2

ພືດ .......... 3

ພືດ (ຕໍ່) .......... 4

ພືດ (ຕໍ່) .......... 5

ສັດ .......... 6

ສັດ (ຕໍ່) .......... 7

ສັດ (ຕໍ່) .......... 8

ສັດ (ຕໍ່) .......... 9

ສັດ (ຕໍ່) .......... 10

ສັດ (ຕໍ່) .......... 11

ອາກາດ .......... 12

ດິນ .......... 13

ດິນ (ຕໍ່) .......... 14

ຫີນ ແລະ ຊາຍ .......... 15

ການບົວລະບັດ ແລະ ປົກປັກຮັກສາ .......... 16

ບົວລະບັດຮັກສາພືດ .......... 17

ບົວລະບັດຮັກສາສັດ .......... 18

ການຮັກສານ້ຳ .......... 19

ການຮັກສານ້ຳ (ຕໍ່) .......... 20

ການຮັກສານ້ຳ (ຕໍ່) .......... 21

ການຮັກສາອາກາດ .......... 22

ປົກປັກຮັກສາ ດິນ, ຫີນ ແລະ ຊາຍ .......... 23

ສິ່ງແວດລ້ອມທີ່ຄົນສ້າງຂຶ້ນ ແລະ ປະໂຫຍດ .......... 24

ສິ່ງແວດລ້ອມທີ່ຄົນສ້າງຂຶ້ນ .......... 25

ປະໂຫຍດຂອງວັດ .......... 26

ປະໂຫຍດຂອງສວນສາທາລະນະ........................................................................ 27
ປະໂຫຍດຂອງຕະຫຼາດ........................................................................................ 28
ປະໂຫຍດຂອງ ຖະໜົນ........................................................................................ 29
ປະໂຫຍດຂອງໂຮງໝໍ........................................................................................ 30
ການປົກປັກຮັກສາສິ່ງແວດລ້ອມທີ່ຄົນສ້າງຂຶ້ນ.......................................................... 31
ວັດ........................................................................................................... 32
ສວນສາທາລະນະ........................................................................................... 33
ຕະຫຼາດ..................................................................................................... 34
ຖະໜົນ...................................................................................................... 35
ໂຮງໝໍ....................................................................................................... 36

# ກິດຈະກຳການຮຽນ-ການສອນ

# ໜ່ວຍ: ສິ່ງແວດລ້ອມອ້ອມຕົວເຮົາ

## ສຳລັບຊັ້ນອະນຸບານປີທີ 1



**ເນື້ອໃນການຮຽນຂອງໜ່ວຍສິ່ງແວດລ້ອມອ້ອມຕົວເຮົາປະກອບມີ:**

1. ສິ່ງແວດລ້ອມທາງທຳມະຊາດ ແລະ ປະໂຫຍດ.
2. ການບົວລະບັດ ແລະ ການປົກປັກຮັກສາສິ່ງແວດລ້ອມທາງທຳມະຊາດ.
3. ສິ່ງແວດລ້ອມອ້ອມຕົວທີ່ຄົນສ້າງຂຶ້ນ.
4. ການປົກປັກຮັກສາສິ່ງແວດລ້ອມທີ່ຄົນສ້າງຂຶ້ນ ແລະ ປະໂຫຍດ.

# ສິ່ງແວດລ້ອມທາງທຳມະຊາດ ແລະ ປະໂຫຍດ



**ເນື້ອໃນການຮຽນຂອງຫົວຂໍ້ ສິ່ງແວດລ້ອມທາງທຳມະຊາດ ແລະ ປະໂຫຍດປະກອບມີ:**

1. ສິ່ງແວດລ້ອມທາງທຳມະຊາດ.
2. ພືດ.
3. ສັດ.
4. ນໍ້າ, ອາກາດ.
5. ດິນ, ຫີນ ແລະ ຊາຍ.

# ພືດ



**ຈຸດປະສົງ:** ເພື່ອໃຫ້ເດັກບອກຊື່ພືດ ແລະ ປະໂຫຍດ.

**ກິດຈະກໍາ:**

- ສັງເກດເບິ່ງຮູບ ແລະ ຕອບຄໍາຖາມດັ່ງນີ້: ຫຼານເຫັນຫຍັງໃນຮູບນີ້? ຢູ່ເຮືອນຫຼານມີຕົ້ນໄມ້ບໍ່? ມີຕົ້ນຫຍັງແດ່?
- ສະຫຼຸບ: ພືດມີຕົ້ນໄມ້, ຕົ້ນໄມ້ໃຫ້ຮົ່ມ, ໃຫ້ໝາກ, ເຮັດເຮືອນ, ໂຕະ ແລະ ຕັ່ງ
- ທາສີຮູບເດັກນ້ອຍເກັບໝາກໄມ້ ໂດຍນໍາໃຊ້ສີຕາມໃຈ.

# ພືດ (ຕໍ່)







**ຈຸດປະສົງ:** ເພື່ອໃຫ້ເດັກບອກຊື່ພືດ ແລະ ປະໂຫຍດ.

**ກິດຈະກໍາ:**

- ສັງເກດເບິ່ງຮູບ ແລະ ຕອບຄໍາຖາມດັ່ງນີ້: ຫຼານເຫັນຫຍັງໃນຮູບນີ້? ຫຼານເຄີຍກິນຜັກບໍ?
- ສະຫຼຸບ: ພືດມີຜັກເຊັ່ນ: ຜັກກາດ, ຜັກບົ້ງ, ຜັກຕໍານິນ ແລະ ຜັກໃຊ້ໄວ້ເປັນອາຫານ.
- ທາສີຮູບຜັກ ໂດຍນໍາໃຊ້ສີຕາມໃຈ.

# ພືດ (ຕໍ່)



**ຈຸດປະສົງ:** ເພື່ອໃຫ້ເດັກບອກຊື່ພືດ ແລະ ປະໂຫຍດ.

**ກິດຈະກໍາ:**

- ສັງເກດເບິ່ງຮູບ ແລະ ຕອບຄໍາຖາມດັ່ງນີ້: ຫຼານເຫັນຫຍັງໃນຮູບນີ້? ຫຍ້າເປັນອາຫານ ຂອງສັດຫຍັງ?
- ສະຫຼຸບ: ຫຍ້າກໍແມ່ນພືດ ແລະ ຫຍ້າເປັນອາຫານຂອງສັດ.
- ທາສີຮູບງົວ ໂດຍນໍາໃຊ້ສີຕາມໃຈ.

# ສັດ



**ຈຸດປະສົງ:** ເພື່ອໃຫ້ເດັກບອກຊື່ສັດ ແລະ ປະໂຫຍດ.

**ກິດຈະກຳ:**

- ສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ຫຼານເຫັນສັດຫຍັງໃນຮູບນີ້? ເຮືອນຂອງຫຼານລ້ຽງໄກ່ບໍ? ໄກ່ໃຊ້ໄວ້ເຮັດຫຍັງ?
- ສະຫຼຸບ: ສັດມີໄກ່, ລ້ຽງໄວ້ເປັນອາຫານ.
- ທາສີຮູບໄກ່ ໂດຍນຳໃຊ້ສີຕາມໃຈ.

# ສັດ (ຕໍ່)



**ຈຸດປະສົງ:** ເພື່ອໃຫ້ເດັກບອກຊື່ສັດ ແລະ ປະໂຫຍດ.

**ກິດຈະກຳ:**

- ສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ຫຼານເຫັນສັດຫຍັງໃນຮູບນີ້? ເຮືອນຂອງ ຫຼານລ້ຽງໝູບໍ? ໝູໃຊ້ໄວ້ເຮັດຫຍັງ?
- ສະຫຼຸບ: ສັດ ມີໝູ, ລ້ຽງໄວ້ເປັນອາຫານ.
- ທາສີຮູບໝູ ແລະ ເດັກ ໂດຍນຳໃຊ້ສີຕາມໃຈ.

# ສັດ (ຕໍ່)



**ຈຸດປະສົງ:** ເພື່ອໃຫ້ເດັກບອກຊື່ສັດ ແລະ ປະໂຫຍດ.

**ກິດຈະກຳ:**

- ສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ຫຼານເຫັນສັດຫຍັງໃນຮູບນີ້? ເຮືອນຂອງ ຫຼານລ້ຽງງົວບໍ? ງົວໃຊ້ໄວ້ເຮັດຫຍັງ?
- ສະຫຼຸບ: ສັດມີງົວ, ລ້ຽງໄວ້ເປັນອາຫານ ແລະ ໃຊ້ແຮງງານ.
- ທາສີຮູບຄົນ ແລະ ງົວ ໂດຍນຳໃຊ້ສີຕາມໃຈ.

# ສັດ (ຕໍ່)



**ຈຸດປະສົງ:** ເພື່ອໃຫ້ເດັກບອກຊື່ສັດ ແລະ ປະໂຫຍດ.

**ກິດຈະກຳ:**

- ສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ຫຼານເຫັນສັດຫຍັງໃນຮູບນີ້? ຫຼານເຄີຍໄດ້ຂີ່ຊ້າງບໍ?
- ສະຫຼຸບ: ສັດມີຊ້າງ, ລ້ຽງໄວ້ໃຊ້ແຮງງານ.
- ທາສີຮູບຊ້າງ ແລະ ຄົນ ໂດຍນຳໃຊ້ສີຕາມໃຈ.

# ສັດ (ຕໍ່)





**ຈຸດປະສົງ:** ເພື່ອໃຫ້ເດັກບອກຊື່ສັດ ແລະ ປະໂຫຍດ.

**ກິດຈະກໍາ:**

- ສັງເກດເບິ່ງຮູບ ແລະ ຕອບຄໍາຖາມດັ່ງນີ້: ຫຼານເຫັນສັດຫຍັງແດ່ໃນຮູບນີ້? ຫຼານເຫັນເສືອ ແລະ ໝີ ຢູ່ໃສ? ເສືອ ແລະ ໝີ ລ້ຽງໄວ້ເຮັດຫຍັງ?
- ສະຫຼຸບ: ສັດມີເສືອ ແລະ ໝີ, ລ້ຽງເອົາໄວ້ເບິ່ງ.
- ທາສີຮູບສັດ ໂດຍນໍາໃຊ້ສີຕາມໃຈ.

# ນ້ຳ





**ຈຸດປະສົງ:** ເພື່ອໃຫ້ເດັກບອກປະໂຫຍດຂອງນ້ຳ.

**ກິດຈະກຳ:**

- ສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ເດັກນ້ອຍໃນຮູບນີ້ເຮັດຫຍັງ? ນ້ຳໃຊ້ໄວ້ເຮັດຫຍັງ?
- ສະຫຼຸບ: ນ້ຳໃຊ້ໄວ້ ດື່ມ ແລະ ໃຊ້.
- ທາສີຮູບເດັກນ້ອຍດື່ມນ້ຳ ແລະ ຫົດດອກໄມ້ ໂດຍນຳໃຊ້ສີຕາມໃຈ.

# ອາກາດ



**ຈຸດປະສົງ:** ເພື່ອໃຫ້ເດັກບອກປະໂຫຍດຂອງອາກາດ.

**ກິດຈະກຳ:**

- ສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ເດັກນ້ອຍໃນຮູບນີ້ເຮັດຫຍັງ? ອາກາດໃຊ້ໄວ້ເຮັດຫຍັງ?
- ສະຫຼຸບ: ປະໂຫຍດຂອງອາກາດແມ່ນໃຊ້ໄວ້ຫາຍໃຈ,
- ທາສີຮູບເດັກນ້ອຍ ແລະ ທຳມະຊາດ ໂດຍນຳໃຊ້ສີຕາມໃຈ.

# ດິນ



**ຈຸດປະສົງ:** ເພື່ອໃຫ້ເດັກບອກປະໂຫຍດຂອງດິນ.

**ກິດຈະກຳ:**

- ສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ຄົນໃນຮູບນີ້ກຳລັງເຮັດຫຍັງ? ດິນ ໃຊ້ປູກຫຍັງແດ່?
- ສະຫຼຸບ:  ດິນໃຊ້ໄວ້ປູກຝັງ.
- ທາສີຮູບຄົນ ໂດຍນຳໃຊ້ສີຕາມໃຈ.

# ດິນ (ຕໍ່)







**ຈຸດປະສົງ:** ເພື່ອໃຫ້ເດັກບອກປະໂຫຍດຂອງດິນ.

**ກິດຈະກໍາ:**

- ສັງເກດເບິ່ງຮູບ ແລະ ຕອບຄໍາຖາມດັ່ງນີ້: ຫຼານເຫັນຫຍັງໃນຮູບນີ້? ດິນໃຊ້ໄວ້ປັ້ນຫຍັງແດ່?
- ສະຫຼຸບ:  ດິນໃຊ້ຜະລິດເຄື່ອງໃຊ້ເຊັ່ນ: ໝໍ້, ໄຫ, ດິນຈີ່ ແລະ ໂຖດອກໄມ້.
- ທາສີຮູບໝໍ້, ໄຫ ແລະ ໂຖດອກໄມ້ ໂດຍນໍາໃຊ້ສີຕາມໃຈ.

# ຫີນ ແລະ ຊາຍ



**ຈຸດປະສົງ:** ເພື່ອໃຫ້ເດັກບອກປະໂຫຍດຂອງຫີນ ແລະ ຊາຍ.

**ກິດຈະກຳ:**

- ສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ຫຼານເຫັນຫຍັງໃນຮູບນີ້? ຫີນ ແລະ ຊາຍໃຊ້ໄວ້ເຮັດຫຍັງແດ່?
- ສະຫຼຸບ: ຫີນ ແລະ ຊາຍໃຊ້ ສ້າງທາງ ແລະ ເຮັດເຮືອນ.
- ທາສີຮູບເຮືອນ ໂດຍນຳໃຊ້ສີຕາມໃຈ.

# ການບົວລະບັດ ແລະ ປົກປັກຮັກສາ



**ເນື້ອໃນການຮຽນຂອງຫົວຂໍ້ ການບົວລະບັດ ແລະ ປົກປັກຮັກສາປະກອບມີ:**

1. ບົວລະບັດຮັກສາພືດ.
2. ບົວລະບັດຮັກສາສັດ.
3. ປົກປັກຮັກສານໍ້າ.
4. ປົກປັກຮັກສາອາກາດ.
5. ປົກປັກຮັກສາດິນ, ຫີນ ແລະ ຊາຍ.

# ບົວລະບັດຮັກສາພືດ



**ຈຸດປະສົງ:** ເພື່ອໃຫ້ເດັກບອກການບົວລະບັດຮັກສາພືດ.

**ກິດຈະກຳ:**

- ສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ຫຼານເຫັນຫຍັງໃນຮູບນີ້? ຫຼານເຄີຍຫົດນ້ຳຕົ້ນໄມ້ບໍ?
- ສະຫຼຸບ: ການບົວລະບັດຮັກສາພືດຕ້ອງຫົດນ້ຳ, ໃສ່ຝຸ່ນ, ບໍ່ຕັດຕົ້ນໄມ້, ບໍ່ເດັດໃບ ແລະ ດອກ.
- ທາສີຮູບຄົນ ແລະ ພືດ ໂດຍນຳໃຊ້ສີຕາມໃຈ.

# ບົວລະບັດຮັກສາສັດ



**ຈຸດປະສົງ:** ເພື່ອໃຫ້ເດັກບອກການບົວລະບັດຮັກສາສັດ.

**ກິດຈະກຳ:**

- ສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ຄົນໃນຮູບນີ້ກຳລັງເຮັດຫຍັງ? ຫຼານເຄີຍໃຫ້ ອາຫານສັດບໍ?
- ສະຫຼຸບ: ການບົວລະບັດຮັກສາສັດແມ່ນໃຫ້ອາຫານ ແລະ ໃຫ້ທີ່ຢູ່ອາໄສ.
- ທາສີຮູບເດັກນ້ອຍ ແລະ ໄກ່ ໂດຍນຳໃຊ້ສີຕາມໃຈ.

# ປົກປັກຮັກສານ້ຳ



**ຈຸດປະສົງ:** ເພື່ອໃຫ້ເດັກບອກການປົກປັກຮັກສານ້ຳ.

**ກິດຈະກຳ:**

- ສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ຫຼານເຫັນຫຍັງໃນຮູບນີ້? ຢູ່ເຮືອນຫຼານໄດ້ປິດນ້ຳໄວ້ບໍ?
- ສະຫຼຸບ: ການປົກປັກຮັກສານ້ຳແມ່ນບໍ່ເປີດນ້ຳປະໄວ້.
- ທາສີຮູບເດັກນ້ອຍ ໂດຍນຳໃຊ້ສີຕາມໃຈ.

# ປົກປັກຮັກສານ້ຳ (ຕໍ່)



**ຈຸດປະສົງ:** ເພື່ອໃຫ້ເດັກບອກການປົກປັກຮັກສານ້ຳ.

**ກິດຈະກຳ:**

- ສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ຫຼານເຫັນຫຍັງໃນຮູບນີ້?
- ສະຫຼຸບ: ການປົກປັກຮັກສານ້ຳແມ່ນບໍ່ຖ່າຍໃສ່ແມ່ນ້ຳ.
- ທາສີຮູບເດັກນ້ອຍ ແລະ ຫ້ອງນ້ຳ ໂດຍນຳໃຊ້ສີຕາມໃຈ.

# ປົກປັກຮັກສານ້ຳ (ຕໍ່)



**ຈຸດປະສົງ:** ເພື່ອໃຫ້ເດັກບອກການປົກປັກຮັກສານ້ຳ.

**ກິດຈະກຳ:**

- ສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ຫຼານເຫັນຫຍັງໃນຮູບນີ້?
- ສະຫຼຸບ: ການປົກປັກຮັກສານ້ຳແມ່ນບໍ່ຖິ້ມຂີ້ເຫຍື້ອໃສ່ນ້ຳ.
- ທາສີຮູບເດັກນ້ອຍ ແລະ ຕົ້ນໄມ້ ໂດຍນຳໃຊ້ສີຕາມໃຈ.

# ປົກປັກຮັກສາອາກາດ



**ຈຸດປະສົງ:** ເພື່ອໃຫ້ເດັກບອກການປົກປັກຮັກສາອາກາດ.

**ກິດຈະກຳ:**

- ສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ຫຼານເຫັນຫຍັງໃນຮູບນີ້? ເຮົາຄວນຈູດຂີ້ເຫຍື້ອບໍ?
- ສະຫຼຸບ: ການປົກປັກຮັກສາອາກາດ ແມ່ນ ບໍ່ຈູດຂີ້ເຫຍື້ອ.
- ທາສີຮູບເດັກນ້ອຍ ແລະ ເຮືອນ ໂດຍນຳໃຊ້ສີຕາມໃຈ.

# ປົກປັກຮັກສາ ດິນ, ຫີນ ແລະ ຊາຍ



**ຈຸດປະສົງ:** ເພື່ອໃຫ້ເດັກບອກການປົກປັກຮັກສາດິນ, ຫີນ ແລະ ຊາຍ.

**ກິດຈະກຳ:**

- ສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ຫຼານເຫັນຫຍັງໃນຮູບນີ້? ຫຼານເຄີຍເຫັນພໍ່, ແມ່ ປູກຕົ້ນໄມ້ບໍ່? ເປັນຫຍັງຈຶ່ງປູກຕົ້ນໄມ້?
- ສະຫຼຸບ: ການປົກປັກຮັກສາ ດິນ, ຫີນ ແລະ ຊາຍ ແມ່ນປູກຕົ້ນໄມ້ ແລະ ປູກຫຍ້າ.
- ທາສີຮູບຄົນ ແລະ ຕົ້ນໄມ້ ໂດຍນຳໃຊ້ສີຕາມໃຈ.

# ສິ່ງແວດລ້ອມທີ່ຄົນສ້າງຂຶ້ນ ແລະ ປະໂຫຍດ






**ເນື້ອໃນການຮຽນຂອງຫົວຂໍ້ສິ່ງແວດລ້ອມທີ່ຄົນສ້າງຂຶ້ນ ແລະ ປະໂຫຍດປະກອບມີ:**

1. ສິ່ງແວດລ້ອມທີ່ຄົນສ້າງຂຶ້ນ.
2. ປະໂຫຍດຂອງວັດ.
3. ປະໂຫຍດຂອງສວນສາທາລະນະ.
4. ປະໂຫຍດຂອງຕະຫຼາດ, ຖະໜົນ.
5. ປະໂຫຍດຂອງໂຮງໝໍ.

# ສິ່ງແວດລ້ອມທີ່ຄົນສ້າງຂຶ້ນ









**ຈຸດປະສົງ:** ເພື່ອໃຫ້ເດັກບອກສິ່ງແວດລ້ອມທີ່ຄົນສ້າງຂຶ້ນ.

**ກິດຈະກໍາ:**

- ສັງເກດເບິ່ງຮູບ ແລະ ຕອບຄໍາຖາມດັ່ງນີ້: ຫຼານເຫັນຫຍັງໃນຮູບນີ້? ສິ່ງຕ່າງໆນີ້ແມ່ນໃຜເປັນຄົນສ້າງ?
- ສະຫຼຸບ: ສິ່ງແວດລ້ອມທີ່ຄົນສ້າງຂຶ້ນມີວັດ, ສວນສາທາລະນະ, ຕະຫຼາດ, ຖະໜົນ ແລະ ໂຮງໝໍ.
- ທາສີຮູບຄົນ ໂດຍນໍາໃຊ້ສີຕາມໃຈ.

# ປະໂຫຍດຂອງວັດ



**ຈຸດປະສົງ:** ເພື່ອໃຫ້ເດັກບອກປະໂຫຍດຂອງວັດ.

**ກິດຈະກໍາ:**

- ສັງເກດເບິ່ງຮູບ ແລະ ຕອບຄໍາຖາມດັ່ງນີ້: ຫຼານເຫັນໃຜໃນຮູບນີ້? ຫຼານເຄີຍໄປວັດບໍ?, ໄປເຮັດຫຍັງ?
- ສະຫຼຸບ: ວັດເປັນບ່ອນອາໄສຂອງພະສົງ, ຈົວ, ແມ່ຂາວ ແລະ ເປັນບ່ອນທໍາບຸນ.
- ທາສີຮູບຄືນ ໂດຍນໍາໃຊ້ສີຕາມໃຈ.

# ປະໂຫຍດຂອງສວນສາທາລະນະ



**ຈຸດປະສົງ:** ເພື່ອໃຫ້ເດັກບອກປະໂຫຍດ ຂອງສວນສາທາລະນະ.

**ກິດຈະກໍາ:**

- ສັງເກດເບິ່ງຮູບ ແລະ ຕອບຄໍາຖາມດັ່ງນີ້: ຫຼານເຫັນຫຍັງໃນຮູບນີ້? ເຂົາກໍາລັງເຮັດຫຍັງ? ຫຼານເຄີຍໄປຫຼິ້ນບໍ່?
- ສະຫຼຸບ: ສວນສາທາລະນະເປັນບ່ອນພັກຜ່ອນ ແລະ ອອກກໍາລັງກາຍ.
- ທາສີຮູບຄົນ ໂດຍນໍາໃຊ້ສີຕາມໃຈ.

# ປະໂຫຍດຂອງຕະຫຼາດ



**ຈຸດປະສົງ:** ເພື່ອໃຫ້ເດັກບອກ ປະໂຫຍດຂອງຕະຫຼາດ.

**ກິດຈະກໍາ:**

- ສັງເກດເບິ່ງຮູບ ແລະ ຕອບຄໍາຖາມດັ່ງນີ້: ຫຼານເຫັນຫຍັງໃນຮູບນີ້? ຫຼານເຄີຍໄປຕະຫຼາດບໍ? ເພິ່ນເຮັດຫຍັງຢູ່ຕະຫຼາດ?
- ສະຫຼຸບ: ຕະຫຼາດ ເປັນບ່ອນຊື້ ແລະ ຂາຍ.
- ທາສີຮູບຄົນ ໂດຍນໍາໃຊ້ສີຕາມໃຈ.

# ປະໂຫຍດຂອງຖະໜົນ



**ຈຸດປະສົງ:** ເພື່ອໃຫ້ເດັກບອກປະໂຫຍດຂອງຖະໜົນ.

**ກິດຈະກໍາ:**

- ສັງເກດເບິ່ງຮູບ ແລະ ຕອບຄໍາຖາມດັ່ງນີ້: ຫຼານເຫັນຫຍັງໃນຮູບນີ້?
- ສະຫຼຸບ: ຖະໜົນ ເປັນເສັ້ນທາງໄປມາຫາສູ່ເຊິ່ງກັນ ແລະ ກັນ.
- ທາສີຮູບລົດແລ່ນ ໂດຍນໍາໃຊ້ສີຕາມໃຈ.

# ປະໂຫຍດຂອງໂຮງໝໍ





**ຈຸດປະສົງ:** ເພື່ອໃຫ້ເດັກບອກປະໂຫຍດຂອງໂຮງໝໍ.

**ກິດຈະກໍາ:**

- ສັງເກດເບິ່ງຮູບ ແລະ ຕອບຄໍາຖາມດັ່ງນີ້: ຫຼານເຫັນໃຜໃນຮູບນີ້? ຫຼານເຄີຍໄປໂຮງໝໍບໍ?
- ສະຫຼຸບ: ໂຮງໝໍ ເປັນບ່ອນປິ່ນປົວຄົນເຈັບ ແລະ ກວດພະຍາດ.
- ທາສີຮູບຄົນ ໂດຍນໍາໃຊ້ສີຕາມໃຈ.

# ການປົກປັກຮັກສາສິ່ງແວດລ້ອມທີ່ຄົນສ້າງຂຶ້ນ





**ເນື້ອໃນການຮຽນຂອງຫົວຂໍ້ ການປົກປັກຮັກສາສິ່ງແວດລ້ອມທີ່ຄົນສ້າງຂຶ້ນປະກອບມີ:**

1. ວັດ.
2. ສວນສາທາລະນະ.
3. ຕະຫຼາດ.
4. ຖະໜົນ.
5. ໂຮງໝໍ.

# ວັດ



**ຈຸດປະສົງ:** ເພື່ອໃຫ້ເດັກບອກການປົກປັກຮັກສາວັດ.

**ກິດຈະກຳ:**

- ສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ຄວນປົກປັກຮັກສາວັດແນວໃດ?
- ສະຫຼຸບ: ການປົກປັກຮັກສາວັດແມ່ນ ບໍ່ມ້າງເພທຳລາຍ, ບໍ່ຂີດ ແລະ ບໍ່ເຮັດເປື້ອນໃສ່ຕາມກຳແພງວັດ.
- ທາສີຮູບວັດ ໂດຍນຳໃຊ້ສີຕາມໃຈ.

# ສວນສາທາລະນະ



**ຈຸດປະສົງ:** ເພື່ອໃຫ້ເດັກບອກການປົກປັກຮັກສາສວນສາທາລະນະ.

**ກິດຈະກຳ:**

- ສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ຫຼານເຫັນຫຍັງໃນຮູບນີ້? ຖ້າຢາກໃຫ້ສວນສາທາລະນະມີຄວາມສວຍງາມ ພວກເຮົາຄວນເຮັດແນວໃດ?
- ສະຫຼຸບ: ປົກປັກຮັກສາສວນສາທາລະນະ: ບໍ່ຖິ້ມຂີ້ເຫຍື້ອໃສ່ສວນສາທາລະນະ ແລະ ບໍ່ທຳລາຍມ້າງເພເຄື່ອງຫຼິ້ນໃນສວນສາທາລະນະ.
- ທາສີຮູບຄົນ ໂດຍນຳໃຊ້ສີຕາມໃຈ.

# ຕະຫຼາດ



**ຈຸດປະສົງ:** ເພື່ອໃຫ້ເດັກບອກການປົກປັກຮັກສາຕະຫຼາດ.

**ກິດຈະກຳ:**

- ສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ຫຼານເຫັນຫຍັງໃນຮູບນີ້? ຄວນປົກປັກຮັກສາຕະຫຼາດແນວໃດ?
- ສະຫຼຸບ: ການປົກປັກຮັກສາຕະຫຼາດ, ແມ່ນບໍ່ຖິ້ມຂີ້ເຫຍື້ອໃສ່ຊະຊາຍ.
- ທາສີຮູບຄົນ ແລະ ເຄື່ອງ ໂດຍນຳໃຊ້ສີຕາມໃຈ.

# ຖະໜົນ



**ຈຸດປະສົງ:** ເພື່ອໃຫ້ເດັກບອກການປົກປັກຮັກສາຖະໜົນ.

**ກິດຈະກຳ:**

- ສັງເກດຮູບ ແລະ ຕອບຄຳຖາມດັ່ງນີ້: ຫຼານເຫັນຫຍັງໃນຮູບນີ້? ເພື່ອຢາກໃຫ້ຖະໜົນ ສະອາດຄວນປົກປັກຮັກສາແນວໃດ?
- ສະຫຼຸບ: ປົກປັກຮັກສາຖະໜົນແມ່ນບໍ່ຖິ້ມຂີ້ເຫຍື້ອຊະຊາຍ.
- ທາສີຮູບຄົນ ແລະ ຕົ້ນໄມ້ ໂດຍນຳໃຊ້ສີຕາມໃຈ.

# ໂຮງໝໍ




**ຈຸດປະສົງ:** ເພື່ອໃຫ້ເດັກບອກການປົກປັກຮັກສາໂຮງໝໍ.

**ກິດຈະກຳ:**

- ສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ຫຼານເຫັນຫຍັງໃນຮູບນີ້? ຄວນປົກປັກຮັກ ສາໂຮງໝໍແນວໃດ?
- ສະຫຼຸບ: ປົກປັກຮັກສາໂຮງໝໍແມ່ນບໍ່ຖິ້ມຂີ້ເຫຍື້ອຊະຊາຍ ແລະ ບໍ່ແຕ້ມໃສ່ຝາໂຮງໝໍ.
- ທາສີຮູບຄືນ ໂດຍນຳໃຊ້ສີຕາມໃຈ.